ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 140 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 07 ສິງຫາ 2008

# ດຳລັດ

## ວ່າດ້ວຍການສ້າງຕັ້ງ ກົມສື່ສານສະເພາະ

- ອີງຕາມ ເອກະສານສະເໜີສະບັບເລກທີ 802/ກປທ, ລົງວັນທີ 29 ເມສາ 2008 ຂອງກະຊວງປ້ອງກັນປະເທດ;
- ອີງຕາມ ໜັງສືສະເໜີສະບັບເລກທີ 0626/ອປທ, ລົງວັນທີ 14 ກໍລະກົດ 2008 ຂອງອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ;
- ອີງຕາມ ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1.** ອະນຸມັດໃຫ້ສ້າງຕັ້ງ ກົມສື່ສານສະເພາະ ຂຶ້ນກັບອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ ຕາມ ຄວາມເໝາະສົມ ເພື່ອປະຕິບັດໜ້າທີ່ການເມືອງໃນໄລຍະໃໝ່.

**ມາດຕາ 2.** ມອບໃຫ້ທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມດັ່ງກ່າວຢ່າງຮັດກຸມ ແລະ ມີປະສິດທິຜົນ.

**ມາດຕາ 3.** ສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ແລະ ອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4.** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ບົວສອນ ບຸບຜາວັນ